# ປະກັນການຫວ່າງງານແມ່ນຫຍັງ?

ປະກັນການຫວ່າງງານ (UI) ແມ່ນໂຄງການຊ່ວຍເຫຼືອເງິນລາຍໄດ້ຊົ່ວຄາວສໍາລັບລູກຈ້າງໃນລັດແມດສະຈູເຊດ (Massachusetts) ທີ່ສູນເສຍວຽກເຮັດໂດຍບໍ່ແມ່ນເກີດຈາກຄວາມຜິດຂອງເຂົາເຈົ້າເອງ ແລະ:

- ສາມາດເຮັດວຽກໄດ້
- ຫວ່າງພ້ອມທີ່ຈະເຮັດວຽກ ແລະ
- ກໍາລັງຊອກວຽກເຮັດຢ່າງຈິງຈັງ

ເງິນທຶນຊ່ວຍເຫຼືອການຫວ່າງງານແມ່ນມາຈາກເງິນສົມທົບປະຈໍາໄຕມາດ ເຊິ່ງນາຍຈ້າງພາຍໃນລັດຈ່າຍໃຫ້ກັບພະແນກຊ່ວຍເຫຼືອການຫວ່າງງານ (DUA) ລູກຈ້າງບໍ່ມີພາລະໃນການຈ່າຍເງິນສົມທົບປະກັນການຫວ່າງງານ.

# ທ່ານຄວນຍື່ນຂໍເງິນຊ່ວຍເຫຼືອ UI ເມື່ອໃດ?

ຖ້າທ່ານອອກຈາກວຽກງານ ຫຼື ຈໍານວນຊົ່ວໂມງເຮັດວຽກຫຼຸດລົງ ທ່ານຄວນຍື່ນຄໍາຮ້ອງຂໍເງິນຊົດເຊີຍການຫວ່າງງານ**ລະຫວ່າງອາທິດທໍາອິດ**ທີ່ຫວ່າງ ງານ ບໍ່ວ່າຈະຫວ່າງທັງອາທິດ ຫຼືບາງຊ່ວງຂອງອາທິດນັ້ນ. ການຮ້ອງຂໍເງິນຊົດເຊີຍຂອງທ່ານຈະເລີ່ມໃນວັນອາທິດຂອງອາທິດຕາມປະຕິທິນທີ່ທ່ານຍື່ນຄໍາຮ້ອງ. ວັນທີນີ້ຖືວ່າເປັນວັນຂໍເງິນຊົດເຊີຍທີ່ມີຜົນບັງຄັບໃຊ້.

ທ່ານຈະບໍ່ໄດ້ຮັບເງິນຊົດເຊີຍການຫວ່າງງານສໍາລັບອາທິດກ່ອນວັນທີຄໍາຮ້ອງຂໍຂອງທ່ານຈະມີຜົນ ບັງຄັບໃຊ້.

**ໝາຍເຫດສໍາຄັນ:**
ທ່ານສາມາດຂໍເງິນຊົດເຊີຍສະເພາະໃນກໍລະນີທີ່ທ່ານຢູ່ໃນສະຫະລັດ ອາເມຣິກາ, ເຂດດິນແດນຂອງສະຫະລັດ ອາເມຣິກາ ຫຼື ປະເທດການາດາ.
ທ່ານບໍ່ຄວນຮ້ອງຂໍເງິນຊົດເຊີຍສໍາລັບອາທິດໃດໆທີ່ທ່ານອາໄສຢູ່ນອກສະຫະລັດ ອາເມຣິກາ, ເຂດດິນແດນຂອງສະຫະລັດ ອາເມຣິກາ ຫຼື ປະເທດການາດາ.

This pamphlet includes important information on how to apply for Unemployment Insurance benefits.

Este folleto contiene información importante sobre cómo solicitar los beneficios del Seguro de Desempleo.

Este panfleto contém informações importantes sobre como registrar-se para receber benefícios de subsídio de desemprego.

Данный проспект содержит важную информацию о процессе подачи заявления на получение Страхового пособия по безработице.

Livrè sa gen enfòmasyon enpòtan sou fason pou aplike pou Benefis Asirans Chomaj yo.

Il presente opuscolo contiene importanti informazioni riguardanti la modalità di richiesta per l'indennità di disoccupazione.

Cette brochure comporte d'importants renseignements sur la façon de demander des prestations d'assurance-chômage.

សៀវភៅផ្សព្វផ្សាយនេះមានរួមជាមួយនឹងព័ត៌មានសំខាន់ អំពីរបៀបដាក់ពាក្យសុំប្រាក់អត្ថប្រយោជន៍ការធានារ៉ាប់រងការគ្មានការងារ។

Cuốn sách mỏng này bao gồm thông tin quan trọng về cách nộp đơn xin bảo hiểm thất nghiệp

ແຜ່ນເຈ້ຍນີ້ມີຂໍ້ມູນກ່ຽວກັບວິທີການຂໍເອົາເງິນຜົນປະໂຫຍດປະກັນໄພຫວ່າງງານ.

这本小册子包括如何申请失业保险金的重要信息.

이 팜플렛에는 실업 보험 급여의 신청 방법에 대한 중요한 정보가 들어 있습니다.

يحتوي هذا الكتيب على معلومات هامة حول كيفية التقديم للحصول على منافع تأمين البطالة.

**ໂຄງການນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນ**
ຄວາມຊ່ວຍເຫຼືອເສີມແລະບໍລິການຕ່າງໆນີ້ໃຫ້ບໍລິການຕາມຄໍາຮ້ອງຂໍສໍາລັບບຸກຄົນທີ່ມີຄວາມພິການ. ຖ້າຕ້ອງການຖ່າຍທອດສັນຍານສໍາລັບບຸກຄົນທີ່ມີຄວາມພິການທາງຫູ ໃຫ້ໂທເບີ 711.

MASSACHUSETTS DEPARTMENT OF UNEMPLOYMENT ASSISTANCE

0590A Rev 05-06-25 Laotian

MASSACHUSETTS DEPARTMENT OF UNEMPLOYMENT ASSISTANCE

ເຖິງລູກຈ້າງໃນລັດແມດສະຈູເຊດ:

# ວິທີຍື່ນຄໍາຮ້ອງຂໍເງິນຊົດເຊີຍການຫວ່າງງານ

## ເຖິງນາຍຈ້າງໃນລັດແມດສະຈູເຊດ

ພາຍໃຕ້ກົດໝາຍວ່າດ້ວຍການຈ້າງງານ ແລະ ການຝຶກອົບຮົມຂອງລັດ, M.G.L ບົດທີ 151A, ທ່ານຕ້ອງໃຫ້ສໍາເນົາເອກະສານແຜ່ນພັບສະບັບນີ້ທັນທີທີ່ສາມາດເຮັດໄດ້ ແຕ່ບໍ່ເກີນ 30 ມື້ນັບຈາກມື້ສຸດທ້າຍທີ່ລູກຈ້າງໄດ້ເຮັດວຽກທີ່ໄດ້ຮັບຄ່າຕອບແທນ. ທ່ານຕ້ອງຈັດຫາເອກະສານແຜ່ນພັບນີ້ໃຫ້ລູກຈ້າງແຕ່ລະຄົນທີ່ອອກຈາກວຽກງານ ບໍ່ວ່າຈະເປັນການຖາວອນ ຫຼື ຊົ່ວຄາວ. ກະລຸນາກອກ ຂໍ້ມູນຂ້າງລຸ່ມນີ້:

______________________
ຊື່ນາຍຈ້າງ

______________________
ທີ່ຢູ່

______________________
ເບີໂທລະສັບ

______________________
ໝາຍເລກປະຈໍາຕົວນາຍຈ້າງ (EIN)

## ຍື່ນຄຳຮ້ອງຂໍທາງອອນລາຍ

ຖ້າຕ້ອງການຍື່ນຄຳຮ້ອງຂໍເງິນຊົດເຊີຍ UI ຫຼືເປີດຄຳຮ້ອງຂໍໃໝ່ທາງອອນລາຍ ໄປທີ່ເວັບໄຊ ຂອງພວກເຮົາທີ່: mass.gov/dua/uionline.

ຖ້າຕ້ອງການຍື່ນຄຳຮ້ອງຂໍທາງອອນລາຍ ທ່ານຕ້ອງສ້າງບັນຊີສ່ວນບຸຄຄົນ **MyMassGov** ໂດຍເຂົ້າໄປທີ່ mass.gov/how-to/register-for-a-mymassgov-personal-account.

1. ໄປທີ່ເວັບໄຊບໍລິການຊ່ວຍເຫຼືອການຫວ່າງງານທີ່ mass.gov/dua ແລະລັອກອິນເພື່ອໃຊ້ບັນຊີ **MyMassGov** ຂອງທ່ານ.
2. ອ່ານ*ຂໍ້ຕົກລົງສຳລັບຜູ້ຍື່ນຄຳຮ້ອງ (Claimant Agreement)* ໝາຍເອົາກ່ອງທີ່ລະບຸວ່າທ່ານໄດ້ອ່ານແລ້ວ ແລະເລືອກ "ຕໍ່ໄປ".
3. ເມື່ອໄດ້ຮັບການເຕືອນ ໃຫ້ໃສ່ໝາຍເລກປະກັນສັງຄົມແລະວັນເດືອນປີເກີດ.ເລືອກ "ຕໍ່ໄປ".
4. ດຳເນີນການສະໝັກໂດຍເຮັດຕາມຄຳແນະນຳ.
5. ເມື່ອສະໝັກສຳເລັດແລ້ວ ລະບົບຈະສົ່ງທ່ານກັບຄືນໄປໜ້າຈໍແດຊບອດ.

### ຕ້ອງການຄວາມຊ່ວຍເຫຼືອແມ່ນບໍ?

ຖ້າທ່ານມີຄຳຖາມກ່ຽວກັບສິດທິຂອງທ່ານໃນການໄດ້ຮັບຄວາມຊ່ວຍເຫຼືອ ກະລຸນາອ່ານຂໍ້ກຳນົດໃນການມີສິດໄດ້ຮັບຄວາມຊ່ວຍເຫຼືອທາງອອນລາຍທີ່: mass.gov/dua/eligibility.

ສຳລັບຄວາມຊ່ວຍເຫຼືອໃນການສ້າງບັນຊີອອນລາຍ ໄປທີ່: mass.gov/dua/.

## ຂໍ້ມູນທີ່ຈຳເປັນ ໃນການຍື່ນຄຳຮ້ອງຂໍ

ຖ້າຕ້ອງການຍື່ນຄຳຮ້ອງຂໍເງິນຊົດເຊີຍການຫວ່າງງານ ທ່ານຈຳເປັນຕ້ອງໃຫ້ຂໍ້ມູນສ່ວນບຸຄຄົນ ລວມທັງໝາຍເລກປະກັນສັງຄົມ, ວັນເດືອນປີເກີດ, ທີ່ຢູ່ເຮືອນ, ທີ່ຢູ່ອີເມວ ແລະ ເບີໂທລະສັບ.

ທ່ານຕ້ອງໃຫ້ຂໍ້ມູນກ່ຽວກັບປະຫວັດການຈ້າງງານຂອງທ່ານພາຍໃນ 15 ເດືອນທີ່ຜ່ານມາເຊັ່ນກັນ ເຊິ່ງປະກອບດ້ວຍ:

- ຊື່ນາຍຈ້າງທັງໝົດ ພ້ອມດ້ວຍທີ່ຢູ່ ແລະ ເບີໂທລະສັບ.
- ສາເຫດທີ່ອອກຈາກວຽກງານເຫຼົ່ານັ້ນ
- ວັນທີເລີ່ມເຮັດວຽກ ແລະ ວັນທີເລີກຈ້າງ
- ວັນທີຖືກຮຽກຕົວກັບຄືນໄປເຮັດວຽກ (ຖ້າທ່ານຖືກເລອອຟ ແຕ່ມີວັນທີກຳນົດໃຫ້ກັບຄືນໄປເຮັດວຽກ)

ທ່ານອາດຈະຕ້ອງໃຫ້ຂໍ້ມູນເພີ່ມເຕີມໃນບາງກໍລະນີ ເຊັ່ນ:

- **ຖ້າທ່ານບໍ່ແມ່ນພົນລະເມືອງຂອງສະຫະລັດ ອາເມຣິກາ:** ທ່ານຕ້ອງມີໝາຍເລກປະຈຳຕົວຄົນຕ່າງດ້າວ ຫຼື ຢັ້ງຢືນວ່າທ່ານໄດ້ຮັບອະນຸຍາດຕາມກົດໝາຍໃຫ້ເຮັດວຽກໃນສະຫະລັດ ອາເມຣິກາ.
- **ຖ້າທ່ານມີເດັກທີ່ຕ້ອງເພິ່ງພາອາໄສ:** ທ່ານຕ້ອງໃຫ້ວັນເດືອນປີເກີດ ແລະໝາຍເລກປະກັນສັງຄົມຂອງເຂົາເຈົ້າ
- **ຖ້າທ່ານເປັນສະມາຊິກສະຫະພາບແຮງງານ:** ທ່ານຕ້ອງໃຫ້ຊື່ສະຫະພາບແຮງງານ ແລະເບີໂທລະສັບໃນພື້ນທີ່.
- **ຖ້າທ່ານເຄີຍເປັນທະຫານ:** ທ່ານຕ້ອງໃຫ້ແບບຟອມ *DD-214 Member 4* ຂອງທ່ານ. ຖ້າທ່ານບໍ່ມີແບບຟອມນີ້ ທ່ານສາມາດຮ້ອງຂໍແບບຟອມ *DD-214* ຂອງທ່ານໄດ້ທາງອອນລາຍທີ່ dd214.us.

## ຍື່ນຄຳຮ້ອງຂໍທາງໂທລະສັບ

ຖ້າທ່ານຕ້ອງການຍື່ນຄຳຮ້ອງຂໍເງິນຊົດເຊີຍ UI ໃໝ່ ຫຼືເປີດຄຳຮ້ອງຂໍໃໝ່ທາງໂທລະສັບ ກະລຸນາໂທໄປທີ່ສູນ TeleClaim Center ທີ່ເບີ (877) 626-6800.

**ສູນ TeleClaim Center ເປີດໃຫ້ບໍລິການ ເວລາ 8:30 ໂມງເຊົ້າ ຫາ 4:30 ໂມງແລງ ວັນຈັນເຖິງວັນສຸກ.**

ຖ້າຕ້ອງການຮັບເງິນໂດຍການໂອນເຂົ້າບັນຊີໂດຍກົງ ທ່ານຈະຕ້ອງມີຂໍ້ມູນຊື່ທະນາຄານ, ເລກບັນຊີ ແລະ ເລກລະຫັດຕົວແທນທະນາຄານ (routing number). ຖ້າບໍ່ດັ່ງນັ້ນ ທາງພະແນກ DUA ຈະສົ່ງບັດເດບິດໄປໃຫ້ທ່ານ.